# ບົດເລື່ອງສາລະຄະດີ

## ແສງສະຫວ່າງສູ່ຊຸມຊົນ

*ລັດຖະບານ ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ ກຳລັງເຮັດວຽກຮ່ວມກັນ ເພື່ອຊອກຫາວິທີ ສະໜອງໄຟຟ້າໃຫ້ແກ່ຊຸມຊົນທີ່ບໍ່ມີໄຟຟ້າໃຊ້.*

"ບາງຄັ້ງ ຂ້າພະເຈົ້າຄິດວ່າ ຖ້າພວກເຮົາມີໄຟຟ້າໃຊ້, ພວກເຮົາຈະສາມາດໃຊ້ຫຼອດໄຟ. ແລ້ວລູກໆຂອງຂ້າພະເຈົ້າກໍ່ຈະສາມາດຮຽນໜັງສືໄດ້ໃນເວລາທີ່ພວກເຮົາກັບຈາກທົ່ງໄຮ່ທົ່ງນາໃນເວລາຕອນຄໍ່າ," ກ່າວໂດຍ ນາງ ອາດ ໄຊມະນີພົງ, ແມ່ລູກສິບ, ຊາວບ້ານ ບ້ານກະບອງ, ເມືອງນາກາຍ, ແຂວງຄຳມ່ວນ.

ບ້ານກະບອງ ຕັ້ງຢູ່ໄກເກີນໄປທີ່ຈະຕໍ່ໄຟຟ້າເຂົ້າໄດ້. ບ້ານນີ້ຕັ້ງຢູ່ເຂດອ່າງນໍ້າເທີນ, ຢູ່ລຽບແຄມແມ່ນໍ້ານ້ອຍໆສາຍໜຶ່ງ ເຊິ່ງບໍ່ມີຫົນທາງເຂົ້າເຖິງ. ໃນບັນດາເຮືອນ 80 ຫຼັງ, ມີພຽງແຕ່ໜຶ່ງສ່ວນສາມເທົ່ານັ້ນ ທີ່ມີໄຟຟ້າໃຊ້ຈາກ ພະລັງງານແສງຕາເວັນ. ສ່ວນໃຫຍ່ ແມ່ນພຽງພໍສຳລັບໃຊ້ດອກໄຟພຽງດອກດຽວເທົ່ານັ້ນ. ເຈົ້າຂອງຮ້ານຂາຍເຄື່ອງສາມາດນຳໃຊ້ລະບົບໄຟຟ້າທີ່ມີຄວາມສາມາດນຳໃຊ້ໄດ້ສູງກວ່າ ແຕ່ກໍ່ມີພຽງແຕ່ໂທລະພາບໜຶ່ງໜ່ວຍ ແລະ ຕູ້ເຢັນໜຶ່ງໜ່ວຍເທົ່ານັ້ນພາຍໃນບ້ານ.

ເພື່ອເປັນການສະໜັບສະໜຸນເປົ້າໝາຍໃນການຂະຫຍາຍຕາໜ່າງໄຟຟ້າໄປສູ່ເຂດຊົນນະບົດ ຂອງລັດຖະບານ, ອົງການສະຫະປະຊາຊາດ ເພື່ອການພັດທະນາ ກຳລັງຊອກຫາວິທີທີ່ເປັນໄປໄດ້ ສຳລັບການສະໜອງໄຟຟ້າໃຫ້ແກ່ ບ້ານກະບອງ ແລະ ບ້ານໃກ້ຄຽງ. ສະຖາບັນສົ່ງເສີມພະລັງງານທົດແທນຂອງກະຊວງພະລັງງານ ກຳລັງຈັດຕັ້ງປະຕິບັດໂຄງການ ເຊິ່ງໄດ້ຮັບການສະໜັບສະໜຸນໂດຍປະເທດ ເຢຍລະມັນ ແລະ ໂຄງການລິເລີ່ມຕ້ານການປ່ຽນແປງ ດິນຟ້າອາກາດສາກົນຂອງເຢຍລະມັນເອງ.

ໃນການໄປຢ້ຽມຢາມບ້ານກະບອງ ເມື່ອບໍ່ດົນມານີ້, ໄດ້ມີການລະບຸວ່າ ຊຸມຊົນຈະມີແຫຼ່ງພະລັງງານທີ່ໝັ້ນຄົງ ແລະ ເຊື່ອຖືໄດ້ຫຼາຍກວ່າລະບົບໄຟຟ້າຈາກແສງຕາເວັນທີ່ໃຊ້ຢູ່ພາຍໃນບ້ານ. ກະຊວງພະລັງງານ ແລະ ບໍ່ແຮ່ ກຳລັງເບິ່ງວ່າມີຄວາມເປັນໄປໄດ້ແທ້ບໍ່ ທີ່ຈະໃຊ້ພະລັງງານແສງຕາເວັນ ຮ່ວມກັບວິທີອື່ນ. ເຂື່ອນໄຟຟ້າພະລັງງານນໍ້າຂະໜາດນ້ອຍກຳລັງຢູ່ໃນຂັ້ນຕອນການປຶກສາຫາລືກັນ ໂດຍຈະເປັນການສ້າງພະລັງງານຈາກແຮງຍູ້ ທາງທຳມະຊາດ ຈາກແມ່ນໍ້ານ້ອຍໆທີ່ຢູ່ຫຼັງບ້ານ. ດ້ວຍວິທີນີ້, ຈະຮັບປະກັນການສະໜອງພະລັງງານ ໂດຍບໍ່ຄຳນຶງເຖິງສະພາບອາກາດ.

ເມື່ອມີໄຟຟ້າ, ສຸກສາລາໃນຊຸມຊົນ ຈະສາມາດໃຫ້ບໍລິການຄົນເຈັບໄດ້ດີກວ່າ. ນາງ ແປວ, ພະຍາບານປະຈຳສຸກສາລາຂອງບ້ານ ໄດ້ກ່າວວ່າ "ພວກເຮົາຈະສາມາດກວດເລືອກ ແລະ ຮັກສາຢາວັກຊີນ ແລະ ຢາອື່ນໆໄດ້ຢ່າງຖືກຕ້ອງ. ປະຈຸບັນນີ້, ເນື່ອງຈາກວ່າ ພວກເຮົາບໍ່ມີວິທີການຂົນສົ່ງແບບແຊ່ເຢັນ, ຈຶ່ງເຮັດໃຫ້ພວກເຮົາບໍ່ສາມາດສົ່ງຕົວຢ່າງເຂົ້າໄປໃນເມືອງໄດ້. ຄົນເຈັບຕ້ອງໄດ້ເດີນທາງໄປອີກເມືອງໜຶ່ງ ເພື່ອຮັບການກວດເລືອດ,".

ອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ກະຊວງພະລັງງານ ແລະ ບໍ່ແຮ່ ກຳລັງເຮັດວຽກຮ່ວມກັນຢ່າງໃກ້ຊິດ ເພື່ອຊອກຫາວິທີ ທີ່ເໝາະສົມກັບຄວາມຕ້ອງການຂອງຊຸມຊົນ ແລະ ການບຳລຸງຮັກສາ ເພື່ອໃຫ້ມີຄວາມຍືນຍົງ. ອີກແນວທາງໜຶ່ງທີ່ໄດ້ປຶກສາຫາລືກັນກໍ່ຄື ການສ້າງກອງທຶນພັດທະນາບ້ານ ເຊິ່ງເປັນການສະໜອງທຶນຂອງຊຸມຊົນ ເພື່ອການນຳໃຊ້ໄຟຟ້າ. ກອງທຶນນີ້ຈະເປັນການຊ່ວຍໃຫ້ຊາວບ້ານໄດ້ຊອກຫາກິດຈະກຳເຮັດ ເພື່ອສ້າງລາຍຮັບໃຫ້ພວກເຂົາເຈົ້າ.

---

"ການເດີນທາງສູ່ແສງສະຫວ່າງ" – ອ່ານບົດເລື່ອງປະກອບຮູບພາບ ຂອງພວກເຮົາກ່ຽວກັບບ້ານກະບອງ

ອ່ານ ບົດເລື່ອງ ຂອງ ອາເລັກຊານດຣາ ໂຊອິເຊີ, ທີ່ປຶກສາວິຊາການຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ເຊິ່ງໄດ້ເວົ້າເຖິງຄວາມປະທັບໃຈກ່ຽວກັບບ້ານກະບອງ

**ສຳລັບຂໍ້ມູນເພີ່ມຕື່ມ, ກະລຸນາຕິດຕໍ່:**
ທ່ານນາງ ດຣ. ມາກາເຣັດ ໂຈນສ ວິນລຽມສ
ຫົວໜ້າ, ໜ່ວຍງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດ
margaret.jones.williams@undp.org
+856 2055515876